
ການຕີຄວາມໝາຍຂອງຜູ້ທຳນວາຍທີ່ຊຽນ



ບົດຮຽນທີ 8 ສຳລັບສະບາໂຕທີ 21 ພະຈິກ 2026

“ແລ້ວພຣະອົງຈຶ່ງຊົງ
ອະທິບາຍພຣະຄຳພີທຸກ
ຕອນ ທີ່ກ່າວເຖິງເລື່ອງ
ພຣະອົງສູ່ພວກເພິ່ນຟັງ
ຄືເລີ່ມແຕ່ໂມເຊ
ຕະຫລອດເຖິງພວກຜູ້
ທຳນວາຍ.”
ລູກາ 24:27



ໃນລະຫວ່າງການເດີນທາງໄປສູ່ບ້ານ ເອມາອຸດ, ພຣະເຢຊູໄດ້ປະທານບົດຮຽນພຣະຄຳພີໃຫ້ແກ່ສາວົກສອງຄົນຂອງພຣະອົງ. ພວກເຮົາບໍ່ຮູ້ເນື້ອໃນທັງໝົດຂອງບົດຮຽນນັ້ນ, ແຕ່ພວກເຮົາຮູ້ເຖິງວິທີການທີ່ພຣະອົງໃຊ້ໃນການຖ່າຍທອດບົດຮຽນພຣະຄຳພີອັນຊົງພະລັງນັ້ນ. ເຊິ່ງເຮັດໃຫ້ຈິດໃຈຂອງພວກສາວົກຂອງພຣະອົງຮ້ອນຮົນລຸກໄໝ້.



ວິທີການທີ່ດີທີ່ສຸດສຳລັບການສຶກສາພຣະຄຳພີ ແລະ ການແບ່ງປັນຂ່າວສານຂອງພຣະຄຳພີແມ່ນຫຍັງ?

ໃນບົດຮຽນນີ້ພວກເຮົາຈະທົບທວນວິທີການທີ່ມີປະໂຫຍດຫລາຍຢ່າງສຳລັບການສຶກສາພຣະຄຳພີ ເຊິ່ງຈະຊ່ວຍໃຫ້ພວກເຮົາສາມາດແບ່ງປັນຂ່າວສານ ຂອງພຣະຄຳພີໄດ້ຢ່າງຖືກຕ້ອງຕາມຄວາມຈິງ ແລະ ມີປະສິດທິພາບ.



- ການຕີຄວາມໝາຍພຣະຄຳພີ ດ້ວຍຂໍ້ພຣະຄຳພີ
- ບໍລິບົດທາງປະຫວັດສາດ
- ບໍລິບົດທາງວັດທະນະທຳ
- ບໍລິບົດທາງອັນນະຄະດີ
- ຄົ້ນຫາຄວາມໝາຍຂອງພຣະຄຳພີ
- ການສຶກສາພຣະຄຳພີຕາມຫົວຂໍ້

ການຕີຄວາມໝາຍພຣະຄຳພີ ດ້ວຍຂໍ້ພຣະຄຳພີ

“ລາວກຳລັງພະຍາຍາມຈະສັ່ງສອນພວກເຮົາເທື່ອລະໂຕ ເທື່ອລະແຖວ ແລະເທື່ອລະບົດ.””
ເອຊາຢາ 28:10

ພຣະຄຳພີແມ່ນສິ່ງທີ່ອະທິບາຍພຣະຄຳພີໄດ້ດີທີ່ສຸດ



ການອະທິບາຍໂດຍໂຕຂອງພຣະຄຳພີເອງ

- ຕົວຢ່າງເຊັ່ນ: ດານີເອນອະທິບາຍຄວາມໝາຍຂອງນິມິດທີ່ລາວເຫັນ ໂດຍລະບຸວ່າ ສິ່ງເຫລົ່ານັ້ນແມ່ນໝາຍເຖິງອານາຈັກຕ່າງໆ. (ດນອ 7:3, 17)




ການອະທິບາຍເນື້ອຫາໂດຍໃຊ້ຄຳຂອງຜູ້ທຳນວາຍທ່ານອື່ນໆ

- ເອຊາຣາ ໄດ້ອະທິບາຍຄວາມໝາຍຂອງຊ່ວງເວລາ 70 ປີ ຕາມຄຳທຳນວາຍຂອງທ່ານເຢເຣມີຢາ (ຢຣມຢ 25:11-12; 2ຂ່າວຄາວ 36:22-23)



ພັນທະສັນຍາໃໝ່ ອະທິບາຍສິ່ງທີ່ຢູ່ໃນພັນທະສັນຍາເດີມ

- ທ່ານມັດທາຍໄດ້ອະທິບາຍວ່າການປະສູດຂອງພຣະເຢຊູນັ້ນເປັນການເຮັດໃຫ້ ຄຳທຳນວາຍຂອງທ່ານ ເອຊາຢານັ້ນສຳເລັດ (ອຊຢ 7:14; ມທ 1:22-23)




ການຕີຄວາມໝາຍຂອງພຣະຄຳພີ ໂດຍໃຊ້ພຣະຄຳພີ



ພຣະເຢຊູບໍ່ໄດ້ພຽງແຕ່ຕີຄວາມໝາຍຂອງພຣະຄຳພີເດີມເທົ່ານັ້ນ, ແຕ່ຍັງຊົງ ເຜີຍໃຫ້ເຫັນຄວາມໝາຍທີ່ແທ້ຈິງຂອງພຣະຄຳພີດັ່ງກ່າວ ເຊິ່ງເລິກເຊິ່ງຍິ່ງກວ່າຄວາມໝາຍທີ່ເປັນຕົວອັກສອນ

ພັນທະສັນຍາເດີມ	ທ່ານໄດ້ຍິນ...	ພັນທະສັນຍາໃໝ່	ເຮົາບອກພວກເຈົ້າວ່າ...
ອພຍ 20:13	ຢ່າຂ້າຄົນ	ມທ 5:21-22	ຢ່າໂກດເຄືອງຫລືດູໝິ່ນຜູ້ໃດ
ອພຍ 20:14	ຢ່າລ່ວງປະເວນີ	ມທ 5:27-28	ຢ່າເບິ່ງຜູ້ຍິງດ້ວຍຕັນຫາ
ພບຍສ 24:1	ຈົ່ງອອກໜັງສືຢ່າໃຫ້ແກ່ພັນລະຍາ	ມທ 5:31-32	ການຢ່າຮ້າງຈະເຮັດໄດ້ກໍລະນີຫລິ້ນຊູ້ເທົ່ານັ້ນ
ລບລວ 19:12	ຢ່າກ່າວຄຳເທັດ	ມທ 5:33-34	ຫ້າມສາບານບໍ່ວ່າໃນກໍລະນີໃດໆ
ລບລວ 24:20	ຕາຕໍ່ຕາ, ແຂ້ວຕໍ່ແຂ້ວ	ມທ 5:38-39	ຢ່າເຮັດສິ່ງຊົ່ວຕອບແທນ
ລບລວ 19:18	ຈົ່ງຮັກເພື່ອນບ້ານຂອງເຈົ້າ	ມທ 5:43-44	ຈົ່ງຮັກສັດຕູຂອງເຈົ້າ



ບໍລິບົດທາງປະຫວັດສາດ

"ພວກແອນ້ອຍຈະບໍ່ຕາຍຕັ້ງແຕ່ຕອນເກີດໃໝ່ອີກຕໍ່ໄປ ແລະປະຊາຊົນທັງໝົດຈະມີອາຍຸໝັ້ນຍືນຫລາຍ. ຄົນທີ່ມີຊີວິດ ຮ້ອຍປີກໍນັບວ່າຍັງໜຸ່ມຢູ່. ຄົນຕາຍກ່ອນນັ້ນ ເປັນສັນຍານບອກວ່າ, ຖືກເຮົາລົງໂທດເຂົາ."
ເອຊາຢາ 65:20

ພວກເດັກນ້ອຍຈະເສຍຊີວິດຫລືບໍ່ ແລະ ຈະມີຄົນບາບຢູ່ໃນແຜ່ນດິນໂລກຫລືບໍ່? (ອຊຢ 65:17-20)

ເມື່ອຕີຄວາມໝາຍໃນຄວາມສະຫວ່າງຂອງຄຳທຳນວາຍກ່ຽວກັບວາລະສຸດທ້າຍໃນພຣະຄຳພີໃໝ່, ຄຳທຳນວາຍຂອງທ່ານເອຊາຢາບໍ່ພຽງແຕ່ເປັນເລື່ອງທີ່ໜ້າຕົກໃຈເທົ່ານັ້ນ, ແຕ່ຍັງຂັດແຍ່ງກັນອີກດ້ວຍ(ພນມ 21:1-4).

ພວກເຮົາຕ້ອງເຂົ້າໃຈວ່າ, ບໍລິບົດທາງປະຫວັດສາດຂອງທ່ານເອຊາຢານັ້ນເປັນຢ່າງໜຶ່ງ, ແລະ ບໍລິບົດຂອງທາງປະຫວັດສາດຂອງພຣະນິມິດນັ້ນເປັນອີກຢ່າງໜຶ່ງ. ທ່ານ ເອຊາຢາໄດ້ກ່າວເຖິງອະນາຄົດຂອງອິດສະຣາເອນເມື່ອພວກເຂົາຍອມຮັບພຣະເມຊີອາ, ເຖິງຢ່າງໃດກໍ່ຕາມ ໃນສະໄໝຂອງທ່ານໂຢຮັນ, ຊາວອິດສະຣາເອນໄດ້ປະຕິເສດພຣະເມຊີອາແລ້ວ, ບໍລິບົດກໍ່ໄດ້ປ່ຽນໄປແລ້ວ

ຖ້າຫາກອິດສະຣາເອນໄດ້ຍອມຮັບເອົາພຣະເມຊີອາ, ກໍຄົງມີການປ່ຽນແປງຄັ້ງສຳຄັນເກີດຂຶ້ນ: ການໄຖ່ ແລະ ການປ່ຽນແປງໃໝ່ຂອງແຜ່ນດິນໂລກ, ແລະ ມະນຸດຊາດກໍຄົງຈະໄດ້ເລີ່ມຕົ້ນຂຶ້ນແບບຄ່ອຍເປັນຄ່ອຍໄປ. ຄົນບໍຣິສຸດທັງຫລາຍຄົງຈະມີອາຍຸດຍືນຍາວເໝືອນດັ່ງຕົ້ນໄມ້. (ເອຊາຢາ 65:22), ແລະ ສັດທັງຫລາຍຄົງຈະມີຄວາມດຸຮ້າຍໜ້ອຍລົງໃນແຜ່ນດິນ ອຊຢ 65:27



ຈາກນັ້ນ, ໃນທີ່ສຸດ, ຄົນຕາຍກໍຈະຟື້ນຄືນຊີບ ແລະ ຄວາມຕາຍກໍຈະໝົດສິ້ນໄປ (ອຊຢ 26:19, 25:8). ມີພຽງສ່ວນສຸດທ້າຍຂອງຄຳທຳນວາຍຂອງທ່ານເອຊາຢາເທົ່ານັ້ນທີ່ຈະສຳເລັດຕາມໂຕ ອັກສອນ, ເນື່ອງຈາກວ່າ ສ່ວນນີ້ບໍ່ໄດ້ຂຶ້ນຢູ່ກັບການຕັດສິນໃຈຂອງອິດສະຣາເອນ.

ບໍລິບົດທາງວັດທະນະທຳ

"ພີ່ນ້ອງທຸກຄົນໃນທີ່ນີ້ ກໍຝາກຄວາມຄິດເຖິງມາຍັງພວກເຈົ້າ. ຈົ່ງທັກທາຍປາໄສກັນ ດ້ວຍທຳນຽມຈູບອັນບໍຣິສຸດ."
1 ໂກຣິນໂທ 16:20

ໃນຈັກກະພັດໂຣມ, ຄືກັນກັບໃນຫລາຍໆສະຖານທີ່ໃນປະຈຸບັດ, ການທັກທາຍກັນໂດຍການຈູບແກ້ມ ເປັນເລື່ອງທຳມະດາ. ໃນບໍລິບົດທາງວັດທະນະທຳນັ້ນໆ. ຄຳແນະນຳຂອງອຈ ໂປໂລ ເປັນສິ່ງທີ່ເໝາະສົມຫລາຍ (1 ກຣທ 16:20).





ເຖິງຢ່າງໃດກໍ່ຕາມ, ໃນວັດທະນະທຳຍີ່ປຸ່ນ, ໂດຍທົ່ວໄປແລ້ວການສຳຜັດຮ່າງກາຍໃນທີ່ສາທາລະນະນັ້ນເປັນສິ່ງທີ່ຄວນຫລີກເວັ້ນ, ສະນັ້ນມັນອາດຈະເຮັດໃຫ້ຫລາຍຄົນແປກໃຈ ຫລື ບໍ່ສະບາຍໃຈໄດ້



Anglo-Saxon greeting



Thai greeting



Tibetan greeting



New Zealand greeting


ເມື່ອພິຈາລະນາວ່າບໍລິບົດທາງການປະຕິບັດຕາມວັດທະນະທຳທີ່ ອຈ ໂປໂລ ແນະນຳນັ້ນຈະສ້າງການລຳບາກໃຈໃຫ້ກັບພວກເຮົາໃນບາງວັດທະນະທຳ, ພວກເຮົາຈຶ່ງຕ້ອງມີການປັບໃຊ້ໃຫ້ເຂົ້າກັບແຕ່ລະວັດທະນະທຳ



ບໍ່ວ່າພວກເຮົາຈະຢູ່ທີ່ປະເທດຍີ່ປຸ່ນ ຫລື ປະເທດອື່ນໆໃນໂລກ, ໃຫ້ພວກເຮົາທັກທາຍເຊິ່ງກັນແລະກັນໂດຍການທັກທາຍທີ່ຖືກຕ້ອງຕາມວັດທະນະທຳ ເຊິ່ງເປັນການສະແດງອອກເຖິງຄວາມຮັກແພງ, ແຕ່ຕ້ອງບໍ່ແມ່ນການທັກທາຍທີ່ມີການຂາບໄຫວ້ຮູບເຄົາລົບບູຊາມາກ່ຽວຂ້ອງ

ບໍລິບົດທາງອັນມະຄະດີ

“ແລ້ວເວົ້າຕໍ່ພຣະອົງວ່າ, “ຖ້າທ່ານເປັນພຣະບຸດຂອງພຣະເຈົ້າ ຈົ່ງໂດດລົງເບິ່ງດູ ເພາະມີຄຳຂຽນໄວ້ໃນພຣະຄຳພີວ່າ, ‘ພຣະເຈົ້າຈະສັ່ງຝູງເທວະດາ ເຖິງເລື່ອງ ທ່ານ ຝູງເທວະດາຈະໃຊ້ມືຂອງເພິ່ນ ອຸ້ມທ່ານໄວ້ ແມ່ນແຕ່ຕີນຂອງທ່ານຈະບໍ່ໄດ້ ຖືກກ້ອນຫີນ.’” ມັດທາຍ 4:6




ມີຄຳກ່າວທີ່ນິຍົມກັນວ່າ: ຂໍ້ຄວາມທີ່ປາສະຈາກບໍລິບົດ ຍ່ອມກາຍເປັນພຽງຂໍ້ອ້າງ, ຫລື ເວົ້າອີກ ຢ່າງໜຶ່ງກໍຄື: ຂໍ້ຄວາມໃດຂໍ້ຄວາມໜຶ່ງທີ່ມາຕີຄວາມໝາຍໂດຍແຍກອອກຈາກບໍລິບົດ ອາດນຳໄປສູ່ ການຕີຄວາມໝາຍແບບມີຄວາມພໍໃຈແບບສ່ວນໂຕ, ເຊິ່ງມັກຈະຫ່າງໄກຈາກຄຳສອນທີ່ຖືກຕ້ອງ ຂອງພຣະຄຳພີ

ບໍລິບົດຂອງຂໍ້ຄວາມໃນພຣະຄຳພີແມ່ນຫຍັງ?



ບໍລິບົດທີ່ໃກ້ຄຽງປະກອບດ້ວຍຂໍ້ພຣະຄຳພີກ່ອນ ແລະ ຫລັງຂໍ້ຄວາມນັ້ນໆ. ບໍລິບົດທີ່ກ້ວາງຂຶ້ນ ແມ່ນບົດທີ່ພົບຢູ່ໃນຂໍ້ຄວາມນັ້ນ. ພວກເຮົາສາມາດຂະຫຍາຍບໍລິບົດອອກໄປໄດ້ຕື່ມອີກ ໂດຍການ ພິຈາລະນາພຣະຄຳທັງໝົດເຫລັ່ມທີ່ຂໍ້ຄວາມປາກົດຢູ່ນັ້ນ.




ພສລສ 91:11-12 ກ່າວເຖິງການປົກປ້ອງຂອງພຣະເຈົ້າ ຈາກອັນຕະລາຍພາຍນອກ. ໂດຍການນຳເອົາຂໍ້ຄວາມນີ້ ອອກຈາກບໍລິບົດ ແລະ ຍົກມາກ່າວແບບບໍ່ຄົບຖ້ວນ, ຊາຕານໄດ້ພະຍາຍາມເຮັດໃຫ້ພຣະເຢຊູນຳພຣະອົງເອງເຂົ້າ ສູ່ອັນຕະລາຍໂດຍເຈດຕະນາ ດ້ວຍການໃຊ້ຂໍ້ພຣະຄຳພີນີ້ ເປັນຂໍ້ອ້າງ (ມັດທາຍ 4:6).


“ເພື່ອສະໜັບສະໜູນຄຳສອນທີ່ຜິດພາດ ຫຼື ການປະຕິບັດທີ່ບໍ່ສອດຄ່ອງກັບ ຫຼັກຄຣິດສະຕຽນ, ບາງຄົນຈະຍຶດເອົາຂໍ້ຄວາມໃນພຣະຄຳພີທີ່ຖືກຕັດແຍກອອກ ຈາກບໍລິບົດ, ໂດຍອາດຈະຍົກເອົາພຽງເຄິ່ງໜຶ່ງຂອງຂໍ້ພຣະຄຳພີຂໍ້ດຽວມາອ້າງເພື່ອ ພິສູດປະເດັນຂອງພວກເຂົາ, ທັງໆທີ່ສ່ວນທີເຫຼືອຂອງຂໍ້ນັ້ນຈະສະແດງໃຫ້ເຫັນ ວ່າຄວາມໝາຍນັ້ນກົງກັນຂ້າມຢ່າງສິ້ນເຊີງ. ດ້ວຍຄວາມເຈົ້າເລ່ແສນກົນເໝືອນດັ່ງ ໆ, ພວກເຂົາສ້າງທິ່ກຳບັງໃຫ້ຕົນເອງຢູ່ເບື້ອງຫຼັງຖ້ອຍຄຳທີ່ບໍ່ຕໍ່ເນື່ອງກັນ ເຊິ່ງຖືກ ນຳມາຕີຄວາມໃຫ້ເຂົ້າກັບຄວາມປາດຖະໜາຝ່າຍເນື້ອໜັງຂອງພວກເຂົາ. ດ້ວຍ ເຫດນີ້ ຄົນຈຳນວນຫຼາຍຈຶ່ງປິດເບືອນພຣະຄຳຂອງພຣະເຈົ້າໂດຍເຈດຕະນາ. ສ່ວນ ຄົນອື່ນໆ ຜູ້ທີ່ມີຈິນຕະນາການທີ່ເລີດລ້ຳ ກໍຈະຍຶດເອົາພາບປຽບທຽບ ແລະ ສັນຍະລັກຕ່າງໆຂອງພຣະຄຳພີອັນສັກສິດ, ແລ້ວຕີຄວາມໝາຍສິ່ງເຫຼົ່ານັ້ນໃຫ້ເຂົ້າ ກັບຄວາມນຶກຄິດຕາມໃຈມັກຂອງພວກເຂົາ, ໂດຍບໍ່ໄດ້ຄຳນຶງເຖິງຄຳພະຍານ ຂອງພຣະຄຳພີໃນຖານະຜູ້ຕີຄວາມໝາຍດ້ວຍຕົວມັນເອງ, ຈາກນັ້ນພວກເຂົາກໍນຳ ສະເໜີແນວຄິດທີ່ເລື່ອນລອຍຕາມໃຈມັກຂອງພວກເຂົາວ່າເປັນຄຳສອນຂອງພຣະ ຄຳພີ.”

EGW (The Great Controversy, p. 521)

ການຄົ້ນຫາຄວາມຈິງຂອງຂໍ້ພຣະຄຳພີ



"ພຣະເຢຊູເຈົ້າຕອບລາວແບບຖາມຄືນວ່າ, "ກົດບັນຍັດມີຂຽນໄວ້ວ່າຢ່າງໃດ? ເມື່ອທ່ານອ່ານແລ້ວ ເຂົ້າໃຈຢ່າງໃດ?""
ລູກາ 10:26



ຄຣິດສະຕຽນທຸກຄົນຄວນເຂົ້າໃຈພຣະຄຳພີດ້ວຍຕົນເອງ. ພຣະຄຳພີມີຄວາມຊັດເຈນພຽງພໍສຳລັບທຸກຄົນທີ່ຈະເຂົ້າໃຈຫົນທາງແຫ່ງຄວາມລອດ, ແຕ່ກໍມີຄວາມເລິກເຊິ່ງຊັບຊ້ອນພຽງພໍທີ່ຈະທ້າທາຍສະຕິປັນຍາຂອງຜູ້ທີ່ສະຫຼາດຫຼັກແຫຼມທີ່ສຸດຢ່າງຕໍ່ເນື່ອງ. ພຣະຄຳພີເປັນຄັງຊັບສົມບັດແຫ່ງຄວາມຮູ້ທີ່ນຳໄປສູ່ຄວາມລອດອັນບໍ່ມີທີ່ສິ້ນສຸດ ເຊິ່ງບໍ່ມີວັນສຶກສາຄົ້ນຄວ້າໄດ້ຈົນໝົດສິ້ນ.

ແຕ່ທຸກໆການຕີຄວາມໝາຍທີ່ຖືກຕ້ອງຂອງຂໍ້ຄວາມໃນພຣະຄຳພີຕ້ອງຍຶດໝັ້ນຕາມກົດເກນບາງປະການຄື:

ພວກເຮົາຕ້ອງເຂົ້າໃຈຖ້ອຍຄຳຂອງຂໍ້ຄວາມໃນພຣະຄຳພີ (ຫາກເປັນໄປໄດ້, ໂດຍການໃຊ້ພາສາຕົ້ນສະບັບ ຫຼື ສະບັບແປທີ່ແຕກຕ່າງກັນ)

- ເຄົາລົບທຸກໆບໍລິບົດຂອງຂໍ້ຄວາມນັ້ນ (ທາງປະຫວັດສາດ, ວັດທະນະທຳ ແລະ ວັນນະຄະດີ)

ປຽບທຽບກັບຂໍ້ພຣະຄຳພີທີ່ຄູ່ຂະໜານກັນ (ເຊັ່ນ: ພຣະກິດຕິຄຸນທັງສີ່) ຫຼື ຂໍ້ພຣະຄຳພີທີ່ກ່າວເຖິງຫົວຂໍ້ດຽວກັນ

ການຕີຄວາມໝາຍຂັ້ນສຸດທ້າຍຕ້ອງສອດຄ່ອງກັບຄຳສອນຂອງສ່ວນທີ່ເຫຼືອທັງໝົດໃນພຣະຄຳພີ.

ການສຶກສາພຣະຄຳພີຕາມຫົວຂໍ້

"ແລ້ວພຣະອົງຈຶ່ງຊົງອະທິບາຍພຣະຄຳພີທຸກຕອນ ທີ່ກ່າວເຖິງເລື່ອງພຣະອົງສູ່ພວກເພິ່ນຟັງ ຄືເລີ່ມແຕ່ໂມ
ເຊ ຕະຫລອດເຖິງພວກຜູ້ທຳນວາຍ." ລູກາ 24:27



ສຳລັບຄຣິດສະຕຽນແລ້ວ ການອ່ານພຣະຄຳພີບໍ່ແມ່ນຕົວເລືອກ. ແຕ່ພວກເຮົາຕ້ອງເຕີບໂຕຂຶ້ນໃນຄວາມຮູ້ກ່ຽວກັບນ້ຳພຣະໄທຂອງພຣະເຈົ້າເລື້ອຍໆ, ຍອມໃຫ້ພຣະວິນຍານບໍຣິສຸດເປັນຜູ້ຊົງນຳໃນການອ່ານ (ຢຮ 16:13).

ຫລາຍໄປກວ່ານັ້ນ "ຕ້ອງກຽມພ້ອມສຳລັບປົກປ້ອງຄວາມເຊື່ອຂອງຕົນເອງທີ່ມີໃນພຣະຄຣິດສະເໝີ" (1P 3:15).



ການສຶກສາພຣະຄຳພີໂດຍແບ່ງຕາມຫົວຂໍ້ ຈະຊ່ວຍຕຽມພ້ອມໃຫ້ພວກເຮົາສາມາດຖ່າຍທອດຂ່າວສານນັ້ນໃຫ້ແກ່ຜູ້ອື່ນໄດ້, ບໍ່ວ່າຈະເປັນການສອນພຣະຄຳພີ ຫລືການເທດສະໜາກໍຕາມ



ການຮັກສາທ່າທີຖ່ອມໃຈຍັງເປັນສິ່ງທີ່ສຳຄັນ, ເພື່ອໃຫ້ພວກເຮົາສາມາດຮັບປະໂຫຍດຈາກຄວາມຮູ້ໃນພຣະຄຳພີຈາກຜູ້ອື່ນໄດ້ເຊັ່ນກັນ

ເຖິງວ່າພວກເຮົາອາດຈະບໍ່ເຂົ້າໃຈທັງໝົດຂອງເນື້ອຫາ, ແຕ່ພວກເຮົາກໍຮູ້ວ່າ ພຣະເຢຊູຊົງສອນພຣະຄຳພີກ່ຽວກັບພຣະຣາຊກິດຂອງພຣະອົງໃນຖານະພຣະເມຊີອາ ໂດຍໃຊ້ຂໍ້ພຣະຄຳພີຕ່າງໆ (ລກ 24:25-27).




“ບາງສ່ວນຂອງພຣະຄຳພີນັ້ນ ແນ່ນອນວ່າຊັດເຈນເກີນກວ່າທີ່ຈະເຂົ້າໃຈຜິດໄດ້; ແຕ່ກໍມີບາງສ່ວນທີ່ຄວາມໝາຍບໍ່ໄດ້ປາກົດຢູ່ພຽງແຕ່ຜິວເຜີນ ທີ່ຈະເຫັນໄດ້ໃນທັນທີທັນໃດ. ພຣະຄຳພີຕ້ອງຖືກນຳມາປຽບທຽບກັບພຣະຄຳພີ; ຕ້ອງມີການຄົ້ນຄວ້າຢ່າງລະມັດລະວັງ ແລະ ການໄຕ່ຕອງດ້ວຍຄວາມອົດທົນ. ແລະ ການສຶກສາເຊັ່ນນັ້ນຈະໄດ້ຮັບຜົນຕອບແທນຢ່າງອຸດົມສົມບູນ. ເໝືອນດັ່ງຄົນຂຸດບໍ່ແຮ່ທີ່ຄົ້ນພົບສາຍແຮ່ໂລຫະອັນລ້ຳຄ່າທີ່ຊ່ອນຢູ່ໃຕ້ພື້ນດິນ, ຜູ້ທີ່ຄົ້ນຄວ້າພຣະຄຳຂອງພຣະເຈົ້າຢ່າງພາກພຽນເໝືອນດັ່ງຊອກຫາຊັບສົມບັດທີ່ເຊື່ອງໄວ້ ກໍຈະຄົ້ນພົບຄວາມຈິງທີ່ມີຄຸນຄ່າສູງສຸດ (ເຊິ່ງຖືກປິດບັງໄວ້ຈາກສາຍຕາຂອງຄົນທີ່ບໍ່ເອົາໃຈໃສ່.”)

EGW (Our High Calling, July 18)

APPENDIX: INTERPRETING THE TEXTS OF ELLEN G. WHITE

ເມື່ອສຶກສາຂໍ້ຂຽນຂອງ ທ່ານນາງ ເອເລັນ ຈີ ໄວທ໌, ພວກເຮົາຕ້ອງປະຕິບັດຕາມຫຼັກການ ແນະນຳດຽວກັນກັບເມື່ອສຶກສາຂໍ້ຄວາມໃນພຣະຄຳພີ.



ຖ້ອຍຄຳຕ່າງໆ ເຊັ່ນ: “ເງິນທີ່ໃຊ້ຈ່າຍໄປກັບລົດຖີບ ແລະ ເຄື່ອງນຸ່ງຫົ່ມ ລວມທັງສິ່ງຂອງທີ່ບໍ່ຈຳເປັນອື່ນໆນັ້ນ ຈະຕ້ອງຖືກນຳມາໄລ່ລຽງບັນຊີ.” (TM 398), ພວກເຮົາຈະຕ້ອງເຂົ້າໃຈໃນບໍລິບົດທາງປະຫວັດສາດ (ລາຄາຂອງລົດຖີບໃນປີ 1890 ແມ່ນທຽບເທົ່າກັບເງິນເດືອນຫຼາຍເດືອນ).



EGW WRITINGS®
WHITEESTATE.ORG | ELLENWHITE.ORG

ການນຳເອົາວັກຕອນທີ່ຕັດແຍກອອກມາຈາກບໍລິບົດທາງວັນນະຄະດີເດີມມາໃຊ້ ຈະເບິ່ງຄືວ່າ ທ່ານນາງ ເອເລັນ ຈີ ໄວທ໌ ກ່າວໃນສິ່ງທີ່ລາວບໍ່ເຄີຍຕັ້ງໃຈຈະກ່າວ, ຫຼື ປົກປ້ອງຈຸດຢືນດ້ານຫຼັກຄຳສອນທີ່ກົງກັນຂ້າມກັບສິ່ງທີ່ລາວເຊື່ອ ແລະ ສັ່ງສອນ.

ສະນັ້ນກ່ອນທີ່ຈະສະຫຼຸບຜົນ, ພວກເຮົາຕ້ອງສຶກສາທຸກໆສິ່ງທີ່ລາວໄດ້ສັ່ງສອນກ່ຽວກັບຫົວຂໍ້ໃດໜຶ່ງໂດຍສະເພາະ, ແລະ ບໍ່ແມ່ນພຽງແຕ່ອາໄສຖ້ອຍຄຳທີ່ຍົກມາພຽງບໍ່ເທົ່າໃດປະໂຫຍກເທົ່ານັ້ນ.
ໃນທາງກົງກັນຂ້າມ, ພວກເຮົາຕ້ອງຖາມຕົນເອງວ່າ: ລາວໄດ້ຂຽນສິ່ງທີ່ຂ້ອຍກຳລັງໄດ້ຍິນມານັ້ນແທ້ຫຼືບໍ່? ຄວນກວດສອບໃຫ້ແນ່ໃຈສະເໝີວ່າຖ້ອຍຄຳທີ່ຍົກມານັ້ນເປັນຄວາມຈິງ ແລະ ຖືກຕ້ອງແມ່ນຢຳ (ໃຫ້ໃຊ້ເວັບໄຊທາງການ https://egwwritings.org/).

